# ປະຫວັດ

# ເຂດໃຕ້ລາວ

2004

# ປະຫວັດ

# ເຂດໃຕ້ລາວ

ຈັດພິມໂດຍ ຄະນະໂຄສະນາອົບຮົມສູນກາງພັກ



ຄຳໄຕ ສີພັນດອນ

ອະດີດຜູ່ແທນລັດຖະບານລາວອິດສະລະ

ປະຈຳຢູ່ເຂດໃຕ້ລາວ

## ຄຳນຳ

ໃນຂະບວນວິວັດແຫ່ງການຕໍ່ສູ້ ຕ້ານລັດທິຈັກກະພັດລ່າເມືອງຂຶ້ນ ເພື່ອຄວາມເປັນເອກະລາດຂອງຊາດ ແລະ ອິດສະຫລະພາບຂອງປະຊາຊົນລາວ ທີ່ແກ່ຍາວເປັນເວລາຫລາຍທົດສະວັດນັ້ນ ໄດ້ມີຂະບວນການຕໍ່ສູ້ເກີດຂຶ້ນຢູ່ເຂດ ແລະ ທ້ອງຖິ່ນຕ່າງໆໃນທົ່ວປະເທດຂອງພວກເຮົາ. ຂະບວນການຕໍ່ສູ້ໃນແຕ່ລະເຂດ ລ້ວນແຕ່ມີການຈັດຕັ້ງນຳພາ ແລະ ມີຜູ້ຮັບຜິດຊອບຊີ້ນຳ-ບັນຊາໂດຍກົງຊຶ່ງສົມຄວນໄດ້ຮັບການຄົ້ນຄວ້າສັງລວມ ເປັນເອກະສານປະຫວັດສາດ ເພື່ອໂຄສະນາເຜີຍແຜ່ໃຫ້ມະຫາຊົນຮູ້ຈັກ.

ເພື່ອລະນຶກວັນຄ້າຍວັນເກີດຂອງປະທານ ຄຳໄຕ ສີພັນດອນ ຄົບຮອບ 80 ປີ ( 08/02/1924-08/02/2004 ) ຄະນະໂຄສະນາອົບຮົມສູນກາງພັກ ຈຶ່ງໄດ້ຈັດພິມປຶ້ມ "ປະຫວັດເຂດໃຕ້ລາວ" ອອກສູ່ສັງຄົມ ເພື່ອເປັນການສັນລະເສີນ ແລະ ສະແດງຄວາມຮູ້ບຸນຄຸນຕໍ່ຜົນງານການອຸທິດຂອງເພິ່ນ ໃນການຈັດຕັ້ງນຳພາຂະບວນການຕໍ່ສູ້ຂອງປະຊາຊົນບັນດາເຜົ່າຢູ່ເຂດໃຕ້ລາວ ຊຶ່ງໄດ້ປະກອບສ່ວນ

ຢ່າງສຳຄັນເຂົ້າໃນການກໍ່ສ້າງກຳລັງປະຕິວັດໃນທົ່ວປະເທດໃຫ້ເຕີບໃຫຍ່ເຂັ້ມແຂງ ກໍ່ຄືໃນໄຊຊະນະລວມຂອງການຕໍ່ສູ້ປົດປ່ອຍຊາດ.

ພາຍຫລັງສົງຄາມໂລກຄັ້ງທີ່ສອງສິ້ນສຸດລົງ, ພວກລ່າເມືອງຂຶ້ນຝຣັ່ງໄດ້ກັບຄືນມາຮຸກຮານປະເທດເຮົາ ແລະ ປະເທດອື່ນໆໃນອິນດູຈີນ. ຕໍ່ໜ້າສະພາບການດັ່ງກ່າວ ພັກກອມມູນິດອິນດູຈີນ ໄດ້ຊີ້ນຳບັນດາກຳລັງຕໍ່ຕ້ານໃຫ້ຖອນອອກຈາກຕົວເມືອງຕ່າງໆ ໄປສູ່ຊົນນະບົດ ຂຶ້ນໄປເຂດພູດອຍ ເພື່ອສ້າງຮາກຖານການເມືອງ, ສ້າງຖານທີ່ໝັ້ນ, ຂະຫຍາຍກຳລັງ, ດຳເນີນການຕໍ່ສູ້ຕາມແນວທາງ "ຕໍ່ຕ້ານຍືດເຍື້ອຍາວນານ". ຈາກນັ້ນມາຢູ່ເຂດຕ່າງໆໄດ້ມີການຈັດຕັ້ງຄະນະກຳມະການຕໍ່ຕ້ານຝຣັ່ງຂຶ້ນ ເຊັ່ນ: ຄະນະກຳມະການຕໍ່ຕ້ານພາກຕາເວັນອອກ(1946) ໂດຍສະຫາຍ ໜູຮັກ ພູມສະຫວັນ ເປັນປະທານ; ຄະນະກຳມະການຕໍ່ຕ້ານ ພາກຕາເວັນຕົກສຽງເໜືອ (1947) ໂດຍສະຫາຍ ພູມີ ວົງວິຈິດ ເປັນປະທານ; ຢູ່ເຂດຕາເວັນອອກສຽງເໜືອມີກອງຕະລຸມບອນເຂດລາວເໜືອທີ່ບັນຊາໂດຍສະຫາຍ ໄກສອນ ພົມວິຫານ; ສຳລັບຢູ່ເຂດໃຕ້, ລັດຖະບານລາວອິດສະລະໄດ້ແຕ່ງຕັ້ງສະຫາຍ ຄຳໄຕ ສີພັນດອນ ເປັນຜູ້ແທນລັດຖະບານ ໄປນຳພາປະຊາຊົນສ້າງເຂດທີ່ໝັ້ນຕໍ່ຕ້ານ ກ້າວຂຶ້ນສ້າງຄະນະກຳມະການຕໍ່ຕ້ານເຂດໃຕ້ລາວ.

ເມື່ອຮັບໜ້າທີ່ສຳຄັນດັ່ງກ່າວ, ສະຫາຍ ຄຳໄຕ ສີພັນດອນ ໄດ້ທຸ້ມເທສະຕິປັນຍາ ແລະ ກຳລັງວັງຊາຂອງຕົນເຂົ້າໃນການເຄື່ອນໄຫວປຸກລຸກ ແລະ ຈັດຕັ້ງນຳພາປະຊາຊົນທົ່ວເຂດໃຕ້ລຸກຂຶ້ນຕ້ານຝຣັ່ງ. ພາຍໃຕ້ແນວຄິດຊີ້ນຳອີງໃສ່ປະຊາຊົນ, ກຳເອົາປະຊາຊົນ, ປຸກລຸກ ແລະ ຈັດຕັ້ງປະຊາຊົນລຸກຂຶ້ນຕໍ່ສູ້, ສະຫາຍ ຄຳໄຕ ສີພັນດອນ ໄດ້ສຸມໃສ່ປັບປຸງ ແລະ ກໍ່ສ້າງກອງຮ້ອຍໄຊຈັກກະພັດ ຊຶ່ງມີທ່ານ ສີທົນ ກົມມະດຳ ເປັນຜູ້ບັນຊາໃນເວລານັ້ນ ໃຫ້ເປັນກອງທະຫານລາວອິດສະລະປະຈຳຢູ່ເຂດໃຕ້. ສະຫາຍ ຄຳໄຕ ສີພັນດອນ ໄດ້ນຳພາກອງດັ່ງກ່າວ ເຂົ້າຫາປະຊາຊົນບັນດາເຜົ່າ( ໂດຍແບ່ງອອກເປັນຫລາຍກອງໂຄສະນາປະກອບອາວຸດ) ດຳເນີນການປຸກລຸກຂົນຂວາຍປະຊາຊົນ, ສ້າງຮາກຖານການເມືອງ, ສ້າງກຳລັງ ແລະ ສ້າງເຂດທີ່ໝັ້ນຕໍ່ຕ້ານ.

ເພື່ອຮັດແໜ້ນ ແລະ ເພີ່ມທະວີການຮ່ວມສຳພັນສູ້ຮົບລະຫວ່າງລາວກັບຫວຽດນາມ, ສະຫາຍ ຄຳໄຕ ສີພັນດອນ ໄດ້ເດີນທາງໄປພົບກັບສະຫາຍ ຟ້າມວັນດົງ ຜູ້ແທນຂອງລັດຖະບານສາທາລະນະລັດປະຊາທິປະໄຕຫວຽດນາມ ປະຈຳຢູ່ສະຫະເຂດ 5 ພາກໃຕ້ຫວຽດນາມ. ການພົບປະຄັ້ງນີ້ ໄດ້ເປັນຂີດໝາຍສຳຄັນໃນປະຫວັດສາດແຫ່ງການພົວພັນລະຫວ່າງກຳລັງປະຕິວັດຂອງລາວແລະຫວຽດນາມ ທັງເປັນຈຸດເລີ່ມຕົ້ນ ແຫ່ງການຮ່ວມມືຊ່ວຍເຫລືອກັນ

ລະຫວ່າງສະຫະເຂດ 5 ຂອງຫວຽດນາມກັບກຳລັງຕໍ່ຕ້ານຂອງປະຊາຊົນລາວຢູ່ເຂດໃຕ້.

ພາຍໃຕ້ການຊີ້ນຳທີ່ສະຫລຽວສະຫລາດ, ຮອບຄອບຂອງສະຫາຍ ຄຳໄຕ ສີພັນດອນ, ຄະນະກຳມະການຕໍ່ຕ້ານເຂດໃຕ້ ໄດ້ຮັບການສ້າງຕັ້ງຂຶ້ນໃນຕົ້ນປີ 1948 ແລະ ໄດ້ນຳພາປະຊາຊົນບັນດາເຜົ່າທົ່ວເຂດໃຕ້ ລຸກຂຶ້ນຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງ. ດ້ວຍມູນເຊື້ອຕໍ່ສູ້ທີ່ເດັດດ່ຽວ ແລະ ພິລະອາດຫານຂອງປະຊາຊົນບັນດາເຜົ່າເຂດໃຕ້, ດ້ວຍກຳລັງແຮງແຫ່ງຄວາມສາມັກຄີ ຮ່ວມສຳພັນສູ້ຮົບ ລາວ-ຫວຽດນາມ ເຊິ່ງເຂດໃຕ້ລາວໄດ້ຮັບການຊ່ວຍເຫລືອໃນທຸກດ້ານຈາກສະຫະເຂດ 5 ຂອງຫວຽດນາມ, ຂະບວນການຕໍ່ຕ້ານຢູ່ເຂດໃຕ້ໄດ້ຂະຫຍາຍຕົວຢ່າງໄວວາ, ກວ້າງຂວາງ ແລະ ແຂງແຮງ, ອັນເປັນການປະກອບສ່ວນຢ່າງສຳຄັນ ພ້ອມກັບປະຊາຊົນໃນທົ່ວປະເທດ ຕີພວກລ່າເມືອງຂຶ້ນຝຣັ່ງໃຫ້ປະລາໄຊ ໃນປີ 1954.

ເພື່ອເຫັນແຈ້ງມູນເຊື້ອການຕໍ່ສູ້ອັນພິລະອາດຫານຂອງປະຊາຊົນເຂດໃຕ້ ແລະການເຄື່ອນໄຫວນຳພາຂອງຄະນະກຳມະການຕໍ່ຕ້ານເຂດໃຕ້; ເພື່ອເປັນການສັນລະເສີນຜົນງານ ແລະ ຈົດຈຳຄຸນງາມຄວາມດີຂອງປະທານ ຄຳໄຕ ສີພັນດອນ ໃນພາລະກິດຕໍ່ສູ້ປົດປ່ອຍຊາດ, ຄະນະໂຄສະນາອົບຮົມສູນກາງພັກ ຈຶ່ງໄດ້ຮຽບຮຽງ ແລະ ຈັດພິມປຶ້ມເຫລັ້ມນີ້ ເພື່ອໃຫ້ພະນັກງານ, ທະຫານ, ຕຳຫລວດ,

ນັກຮຽນນັກສຶກສາ, ປະຊາຊົນ ແລະ ຄົນຮຸ່ນຫລັງໄດ້ອ່ານ, ໄດ້ສຶກສາຮຽນຮູ້ມູນເຊື້ອອັນສະຫງ່າອົງອາດຂອງພະນັກງານ, ນັກຮົບແລະປະຊາຊົນເຮົາ ໃນພາລະກິດຕໍ່ສູ້ກູ້ຊາດຕ້ານລັດທິລ່າເມືອງຂຶ້ນ ໃນເມື່ອກ່ອນ ແລະ ສືບຕໍ່ເສີມຂະຫຍາຍມູນເຊື້ອດັ່ງກ່າວ ເຂົ້າໃນພາລະກິດປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດອັນແສນຮັກຂອງພວກເຮົາໃຫ້ຮັ່ງມີເຂັ້ມແຂງຍິ່ງໆ ຂຶ້ນ.

ປື້ມເຫລັ້ມນີ້ ເຖິງວ່າຈະບໍ່ສາມາດສັງລວມຂະບວນການຕໍ່ຕ້ານທີ່ກວ້າງຂວາງ, ລະອຽດລະອ່ຽວ ແລະ ບັນດາຮູບການຕໍ່ສູ້ອັນອຸດົມຮັ່ງມີຂອງປະຊາຊົນທົ່ວເຂດໃຕ້ໄດ້ທັງໝົດ, ແຕ່ສາມາດຊ່ວຍໃຫ້ຜູ້ອ່ານເຂົ້າໃຈແຈ້ງຕື່ມອີກ ກ່ຽວກັບເຫດການປະຫວັດສາດອັນສຳຄັນ ແລະການຜັນແປໃນແຕ່ລະໄລຍະ. ອັນສຳຄັນແມ່ນຈະຊ່ວຍໃຫ້ຜູ້ອ່ານເຫັນແຈ້ງພາລະໜ້າທີ່ອັນໜັກໜ່ວງ ທີ່ຄະນະກຳມະການຕໍ່ຕ້ານເຂດໃຕ້ຊຶ່ງມີສະຫາຍ ຄຳໄຕ ສີພັນດອນ ເປັນຜູ້ຮັບຜິດຊອບຊີ້ນຳ ໄດ້ປະຕິບັດດ້ວຍຄວາມເດັດດ່ຽວໝຽວແໜ້ນ,ສະຫລາດຄ່ອງແຄ້ວ ແລະ ເຕີບໃຫຍ່ມີໄຊເປັນກ້າວໆມາ ໃນໄລຍະແຕ່ປີ 1946 ຮອດປີ 1954.

ຄະນະໂຄສະນາອົບຮົມສູນກາງພັກ ຂໍສະແດງຄວາມຂອບໃຈຕໍ່ຄະນະພັກ ແລະ ອຳນາດການປົກຄອງບັນດາແຂວງພາກໃຕ້, ສະມາຄົມອະດີດທະຫານອາສາສະໝັກຫວຽດນາມ ທີ່ສູ້ຮົບຢູ່ລາວ,

ບັນດາສຳນັກງານ, ອົງການ, ກົມກອງ ແລະ ບຸກຄົນທັງລາວ ແລະ ຫວຽດນາມ ທີ່ໄດ້ໃຫ້ການຮ່ວມມືໃນການສະໜອງເອກະສານຂໍ້ມູນ ສຳລັບການຂຽນ ແລະຈັດພິມປຶ້ມເຫລັ້ມນີ້. ພ້ອມກັນນີ້ກໍ່ຫວັງວ່າຈະ ໄດ້ຮັບການຮ່ວມມື ໃນການສະໜອງເອກະສານຂໍ້ມູນຕື່ມອີກ ເພື່ອ ເຮັດໃຫ້ການຈັດພິມຄັ້ງຕໍ່ໄປ ມີເນື້ອໃນຄົບຖ້ວນສົມບູນຍິ່ງຂຶ້ນ.

ຄະນະໂຄສະນາອົບຮົມສູນກາງພັກ

*ພາກທີໜຶ່ງ*

# ການສ້າງເຂດທີ່ໝັ້ນຕໍ່ຕ້ານ
# ແລະ ການຕໍ່ສູ້ຂອງປະຊາຊົນເຂດໃຕ້
# ຕ້ານພວກລ່າເມືອງຂຶ້ນຝຣັ່ງ
# ( 1946-1954 )

## 1)- <u>ສະພາບການຢູ່ເຂດໃຕ້ໄລຍະກ່ອນການຕໍ່ຕ້ານຝຣັ່ງ.</u>

ເມື່ອດິນແດນຢູ່ຝັ່ງຂວາແມ່ນໍ້າຂອງທີ່ຖືກຕັດແບ່ງໃຫ້ຂຶ້ນກັບໄທ ໄດ້ກັບຄືນມາເປັນດິນແດນຂອງລາວ ພາຍຫລັງທີ່ການປະທະກັນ ລະຫວ່າງໄທກັບຝຣັ່ງໄດ້ຢຸດຕິລົງເມື່ອປີ 1946 ນັ້ນ, ຂອບເຂດພື້ນທີ່ຂອງເຂດໃຕ້ໄດ້ລວມເອົາທັງ 3 ແຂວງ: ຈຳປາສັກ, ສາລະວັນ ແລະອັດຕະປື, ຊຶ່ງເປັນໃຈກາງຂອງລາຊະອານາຈັກຈຳປາສັກເມື່ອກ່ອນ, ເປັນເຂດທີ່ມີພົນລະເມືອງແໜ້ນໜາ ແລະ ມີຄວາມອຸດົມສົມບູນ, ມີຊາຍແດນຕິດກັບຫວຽດນາມ, ກຳປູເຈຍ ແລະ ໄທ.

ພູມີປະເທດຂອງເຂດໃຕ້ແບ່ງອອກເປັນ 3 ແຖບຢ່າງຈະແຈ້ງ: ແຖບທົ່ງພຽງ, ເປັນບ່ອນຕັ້ງພູມລຳເນົາຂອງພີ່ນ້ອງລາວລຸ່ມ, ມີທົ່ງພຽງກວ້າງໃຫຍ່, ມີບັນດາຕົວເມືອງ ແລະ ປ່າໄຄກກວມເອົາ 2/5

ຂອງເນື້ອທີ່ທົ່ວເຂດໃຕ້, ເຊິ່ງພື້ນທີ່ສ່ວນໃຫຍ່ຢູ່ຝັ່ງຕາເວັນຕົກ ຂອງແມ່ນ້ຳຂອງ; ແຄບພູດອຍ, ສ່ວນໃຫຍ່ແມ່ນທິດຕາເວັນອອກ ລຽບຕາມຈ້າຍພູເບື້ອງຕາເວັນຕົກຂອງສາຍພູຫລວງ ຕິດກັບຫວຽດນາມ ເປັນບ່ອນຕັ້ງພູມລຳເນົາຂອງພີ່ນ້ອງຊົນເຜົ່າລາວເທິງ ກວມເອົາປະມານ 2/5 ຂອງເນື້ອທີ່ທົ່ວເຂດໃຕ້; ແຄບພູພຽງ, ແມ່ນພູພຽງໂບລະເວນ ມີລະດັບຄວາມສູງສະເລ່ຍແຕ່ 700-800 ແມັດ ທຽບໃສ່ກັບລະດັບນ້ຳທະເລ, ຕັ້ງຢູ່ລະຫວ່າງກາງຂອງເຂດໃຕ້, ເຊິ່ງກວມເອົາສ່ວນໜຶ່ງຂອງເນື້ອທີ່ຂອງທັງ 3 ແຂວງ: ຈຳປາສັກ, ສາລະວັນ ແລະ ອັດຕະປື. ແຄບນີ້ກໍ່ແມ່ນບ່ອນຕັ້ງພູມລຳເນົາ ຂອງພີ່ນ້ອງຊົນເຜົ່າລາວເທິງ ກວມເນື້ອທີ່ປະມານ 1/5 ຂອງເຂດໃຕ້.

ທາງດ້ານການຄົມມະນາຄົມ, ເຂດໃຕ້ມີຄວາມສະດວກດີພໍສົມຄວນ ມີທາງລົດໂອໂຕຕິດລຽນລະຫວ່າງແຂວງຕ່າງໆ ແຕ່ເໜືອຕະຫລອດໃຕ້ ແລະ ທະລຸລົ່ງໄປຮອດກຳປູເຈຍ ແລະ ໄທ. ລະບົບຄົມມະນາຄົມທາງນ້ຳ ກໍ່ມີແມ່ນ້ຳຂອງທີ່ໄຫລຜ່ານທາງກາງ ຂອງແຂວງຈຳປາສັກ ລົງໄປກຳປູເຈຍ ແລະ ມີເຊກອງ, ເຊິ່ງເຮືອແພສາມາດຂຶ້ນລ່ອງຕະຫລອດປີ ແຕ່ອັດຕະປືຮອດກຳປູເຈຍ. ນອກນັ້ນກໍ່ມີນ້ຳເຊໂດນ ເຊິ່ງເຮືອໄປມາໄດ້ໃນບາງຕອນ.

ທາງດ້ານເສດຖະກິດ, ເຂດໃຕ້ມີທົ່ງນາທີ່ກວ້າງໃຫຍ່ຫລາຍທົ່ງ ເປັນຕົ້ນແມ່ນທົ່ງຈຳປະ ສັກ ເຊິ່ງເປັນອູ່ເຂົ້າທີ່ສຳຄັນ ແລະ ລືຊື່ຂອງ

ລາວ. ມີພູພຽງທີ່ເປັນດິນແດງຊຸ່ມຊື່ນ ເໝາະແກ່ການປູກຝັງ ດ້ວຍເນື້ອທີ່ປະມານໜຶ່ງລ້ານເຮັກຕາ. ມີທົ່ງຫຍ້າທີ່ກວ້າງໃຫຍ່ເໝາະສຳລັບການລ້ຽງສັດ. ແຖບນີ້ ຍັງມີແຫລ່ງໄຟຟ້ານ້ຳຕົກຂະໜາດໃຫຍ່ອີກຫລາຍແຫ່ງ ເຊິ່ງສາມາດຜະລິດກະແສໄຟຟ້າໄດ້ປະມານ 3.000 ເມກາວັດ. ເຂດໃຕ້ຍັງເປັນເຂດທີ່ມີປ່າດົງໜາຕຶບ ເປັນຕົ້ນແມ່ນບໍລິເວນດົງກະລໍທີ່ຍາວຢຽດແຕ່ໃຕ້ເມືອງປະທຸມພອນລົງໄປຈົນຕິດດິນກຳປູເຈຍ, ເຊິ່ງມີຕົ້ນໄມ້ທີ່ມີຄ່າຫລາຍຊະນິດ, ມີສັດປ່າທີ່ຫາຍາກຫລາຍປະເພດ ເປັນຕົ້ນແມ່ນຊ້າງ. ຢູ່ຕາມລຳແມ່ນ້ຳ ແລະ ບຶງໜອງຕ່າງໆ ກໍ່ເປັນແຫລ່ງປາທີ່ອຸດົມສົມບູນ.

ເຂດໃຕ້ ຍັງເປັນບ່ອນທີ່ມີທິວທັດທຳມະຊາດສວຍງາມ, ມີປູຊະນີຍະຖານທີ່ເກົ່າແກ່ ແລະ ລືຊື່ຫລາຍແຫ່ງຄື: ວັດພູ, ຄອນພະເພັງ, ພູອາສາ, ອຸບມຸງ, ຕາດເສັດ ແລະ ບັນດາເກາະດອນຕາມລຳແມ່ນ້ຳຂອງ ອັນເປັນເງື່ອນໄຂເອື້ອອຳນວຍ ໃຫ້ແກ່ການຂະຫຍາຍຂະແໜງການທ່ອງທ່ຽວ.

ປະຊາກອນຢູ່ເຂດໃຕ້ລວມມີສອງກຸ່ມຊົນຄື: ລາວລຸ່ມ ແລະ ລາວເທິງ. ລາວລຸ່ມລວມມີຊົນເຜົ່າລາວລຸ່ມ ແລະ ຜູ້ໄທ, ນອກນັ້ນຍັງມີຄົນຊົນເຜົ່າສ່ວຍ ເຊິ່ງແຕ່ກ່ອນແມ່ນຊົນເຜົ່າລາວເທິງ ໄດ້ລົງມາຕັ້ງພູມລຳເນົາປະປົນກັບລາວລຸ່ມ ເປັນເວລາຫລາຍເຊັ່ນຄົນມາແລ້ວ ແລະໄດ້ກາຍເປັນຄົນຊົນເຜົ່າລາວລຸ່ມ.ຊົນເຜົ່າລາວລຸ່ມດຳລົງຊີວິດ

ດ້ວຍການກະເສດ ແລະ ຖືສາສະໜາພຸດ, ມີລະດັບເສດຖະກິດສັງຄົມຂະຫຍາຍຕົວກວ່າລາວເທິງ. ຢູ່ເຂດໃຕ້ກໍ່ເຊັ່ນດຽວກັນກັບທ້ອງຖິ່ນອື່ນໆ ປະຊາຊົນສ່ວນຫລວງຫລາຍ ໃນນັ້ນຕົ້ນຕໍແມ່ນລາວລຸ່ມໄດ້ມີຄວາມເຫລື້ອມໃສໃນພຸດທະສາສະໜາມາແຕ່ດົນນານ, ລະບົບວັດວາອາຮາມ ໄດ້ຮັບການກໍ່ສ້າງຂຶ້ນຢ່າງສວຍສົດງົດງາມ, ມີຖັນແຖວຄູບາອາຈານ, ຜູ້ຮູ້ແຕ່ງກາບກອນ, ຊ່າງວິຈິດຕະກຳ ແລະ ກໍ່ສ້າງເປັນຈຳນວນຫລວງຫລາຍ. ພະສົງ ຍັງເປັນຊັ້ນຄົນທີ່ມີບົດບາດ ແລະ ໄດ້ຮັບຄວາມນັບຖືຢ່າງສູງໃນສັງຄົມ.

ລາວເທິງລວມມີຫລາຍຊົນເຜົ່າ, ເຊິ່ງພາສາ ແລະ ຮີດຄອງປະເພນີກໍ່ມີອັນແຕກຕ່າງກັນ, ເຂົາເຈົ້າດຳລົງຊີວິດດ້ວຍການເຮັດໄຮ່, ເຊື່ອຖືຜີ; ແຕ່ລະປີຂາດເຂົ້າກິນເປັນປະຈຳ, ຂາດເກືອ, ຂາດແຜ່ນແພ ຈຳຕ້ອງໄດ້ນຸ່ງຫົ່ມດ້ວຍເປືອກໄມ້ກໍ່ມີ. ອີກບໍ່ພໍ ລະຫວ່າງຊົນເຜົ່າຕ່າງໆ ຂອງລາວເທິງດ້ວຍກັນ ມີຄວາມແບ່ງແຍກກັນຢ່າງຮ້າຍແຮງ ຍ້ອນການຍາດແຍ່ງດິນດອນຂອງກັນ ລະຫວ່າງເຜົ່ານີ້ກັບເຜົ່າອື່ນຫລືບ້ານນີ້ກັບບ້ານອື່ນ ແລະ ຍ້ອນເຫດຜົນອື່ນໆຫລາຍປະການອັນພາໃຫ້ເກີດຄວາມອາຄາດບາດໝາງກັນ. ບາງບ່ອນຈົນເຖິງຂັ້ນຂ້າຟັນລັນແທງກັນຢ່າງເຄັ່ງຕຶງທີ່ສຸດ, ເຊິ່ງເຂົາເຈົ້າເອີ້ນວ່າ: "ເສິກລະດູ" ແລະ ເຄີຍເກີດເປັນປະຈຳໃນແຕ່ລະປີ.

ສຳລັບຢູ່ເຂດພູພຽງໂບລະເວນ, ພີ່ນ້ອງຊົນເຜົ່າລະເວນ, ຍະ

ເຫີນ, ສ່ວຍ, ກະຕາງ, ອາລັກ, ແງະ ເຂົາເຈົ້າເຄີຍເຮັດໄຮ່ຄືງທີ່ປູກເຂົ້າສາລີ, ຕົ້ນໄມ້ກິນໝາກ ເປັນຕົ້ນ ກາເຟ, ໝາກແໜ່ງ, ເຊິ່ງເປັນສິນຄ້າທີ່ມີລາຄາສູງ, ສະນັ້ນ ຊີວິດການເປັນຢູ່ຂອງເຂົາເຈົ້າດີກວ່າບ່ອນອື່ນໆ.

ເຖິງວ່າມີຕົ້ນກຳເນີດ ແລະ ລະດັບການຂະຫຍາຍຕົວແຕກຕ່າງກັນ ຊ້ຳຍັງຖືກຈັກກະພັດ ແລະ ສັກດີນາແບ່ງແຍກກໍ່ຕາມ, ແຕ່ວ່າປະຊາຊົນເຂດໃຕ້ບໍ່ວ່າລາວລຸ່ມ ຫລື ລາວເທິງລ້ວນແຕ່ມີນ້ຳໃຈຮັກຊາດ ແລະ ມີມູນເຊື້ອສາມັກຄີຕໍ່ສູ້ ຕ້ານແອກປົກຄອງຂອງຈັກກະພັດຝຣັ່ງ. ໃນທ້າຍສະຕະວັດທີ 19 ເມື່ອເວລາກອງທະຫານຂອງພວກຝຣັ່ງຫາກໍ່ເຂົ້າມາເງິນລາວທຳອິດ, ປະຊາຊົນແຂວງຈຳປາສັກກໍ່ໄດ້ພ້ອມກັນເຕົ້າໂຮມກຳລັງ ໂດຍໃຊ້ອາວຸດພື້ນເມືອງຕີພວກມັນຢູ່ດອນຄອນ. ໃນຕົ້ນສະຕະວັດທີ 20, ປະຊາຊົນລາວເທິງ ໂດຍໃຕ້ການນຳພາຂອງອົງແກ້ວ - ອົງກົມມະດຳ ໄດ້ພ້ອມກັນລຸກຮືຂຶ້ນຕໍ່ສູ້ຕ້ານກັບຝຣັ່ງ ເປັນເວລາ 36 ປີຕິດຕໍ່ກັນ, ຈົນກະທັ້ງພາຍຫລັງທີ່ພວກຈັກກະພັດຝຣັ່ງ ສ້າງລະບອບການປົກຄອງຂອງພວກເຂົາຂຶ້ນຢູ່ລາວໄດ້ແລ້ວ ກໍ່ຍັງມີຫລາຍທ້ອງຖິ່ນຖືວ່າເປັນເຂດທີ່ "ບໍ່ຍອມຈຳນົນ"[o], ມີຫລາຍໝູ່ບ້ານຢູ່ແຖບດາກຈຶງ ເມື່ອຝຣັ່ງເຂົ້າມາປະຊາຊົນ

---

[o] ZONE INSOUMIS.

ກໍ່ພ້ອມກັນໜີອອກຈາກບ້ານບໍ່ຍອມຕ້ອນຮັບແລະບໍ່ຮ່ວມມືກັບຝຣັ່ງ.

ເດືອນກັນຍາ 1945, ພາຍຫລັງພວກຊຸນເສິກຍີ່ປຸ່ນ ຍອມຈຳນົນຕໍ່ຝ່າຍສຳພັນທະມິດ, ໂດຍໄດ້ຮັບການຮ່ວມມື ແລະ ຊ່ວຍເຫລືອຈາກພວກສັກດີນາ ບຸນອູ້ມ ນະຈຳປາສັກ, ພວກລ່າເມືອງຂຶ້ນຝຣັ່ງໄດ້ກັບຄືນມາຄຶ້ດຄອງເຂດໃຕ້ອີກເທື່ອໃໝ່. ກຳລັງທະຫານຝຣັ່ງແຕກທັບ ທີ່ລີ້ຊ່ອນຢູ່ຕາມແຖບຊາຍແດນຕິດກັບກຳປູເຈຍ ໄດ້ເຂົ້າມາຍຶດເອົາຕົວເມືອງສາລະວັນໃນວັນທີ7 ກັນຍາ 1945, ປາກເຊ ໃນວັນທີ່ 12 ກັນຍາ 1945 ແລະ ຫາດຊາຍຄູນໃນວັນທີ່ 15 ກັນຍາ ປີ 1945.

ພາຍຫລັງທີ່ໄດ້ຮັບການຊ່ວຍໜູນຈາກກອງທະຫານອັງກິດທີ່ເຂົ້າມາປົດອາວຸດພວກຊຸນເສິກຍີ່ປຸ່ນ, ທະຫານຝຣັ່ງໄດ້ສວຍເອົາໂອກາດນີ້ເຂົ້າມາຍຶດເອົາເມືອງປາກເຊ, ຍຶດເອົາຕົວເມືອງຕ່າງໆ ໃນແຂວງຈຳປາສັກ, ຍຶດເອົາປາກຊ່ອງໃນທ້າຍປີ 1945 ເພື່ອຄວບຄຸມ ແລະ ກວດກາພູພຽງໂບລະເວນ ແລະ ຍຶດເອົາຕົວເມືອງອັດຕະປື.

ເມື່ອດິນແດນທາງຝັ່ງຂວາແມ່ນ້ຳຂອງ ໄດ້ມາເປັນດິນແດນຂອງລາວແລ້ວ, ຈັກກະພັດຝຣັ່ງໄດ້ກຳເອົາພວກເຈົ້າສັກດີນາ ບຸນອູ້ມ ນະຈຳປາສັກ, ຍູ້ແຮງການເກັບເກນທະຫານ, ສ້າງຕັ້ງລະບົບປົດຄ້າຍທະຫານ ແລະ ປັບປຸງລະບົບກົງຈັກການປົກຄອງຂອງພວກຫຸ່ນຢູ່ຕາມທ້ອງຖິ່ນຕ່າງໆ ຄືນໃໝ່, ສ້າງເຮັດໃຫ້ເຂດໃຕ້ກາຍເປັນ

ເຂດແນວຫລັງທີ່ປອດໄພ ແລະ ທັງເປັນຂົວຕໍ່ ໃຫ້ແກ່ການລຳລຽງ ຂົນສົ່ງຂອງພວກເຂົາ ເພື່ອສະໜອງໃຫ້ທົ່ວສະໜາມຮົບຢູ່ໃນລາວ ແລະ ສ່ວນໜຶ່ງຂອງສະໜາມຮົບໃນເບື້ອງຕາເວັນຕົກສຽງເໜືອຂອງ ຫວຽດນາມ.

ພວກເຂົາເພີ່ມທະວີການໂຄສະນາຊວນເຊື່ອວ່າ: ຝຣັ່ງໄດ້ ມອບເອກະລາດ ໃຫ້ແກ່ລາວແລ້ວ; ກອງທະຫານຂອງສະຫະພັນ ຝຣັ່ງ ພຽງແຕ່ເຮັດໜ້າທີ່ຊ່ວຍລາວປົກປັກຮັກສາເອກະລາດ ຕ້ານ ກັບການຮຸກຮານຂອງຕ່າງດ້າວເທົ່ານັ້ນ; ຊາວໜຸ່ມລາວມີໜ້າທີ່ໄປ ເປັນທະຫານ ຮ່ວມກັບກອງທະຫານຂອງສະຫະພັນຝຣັ່ງ ຕ້ານຄືນ ກັບຫວຽດມິນ ແລະລາວອິດສະລະເພື່ອປົກປັກຮັກສາພະລາຊະບັນ ລັງ, ປົກປັກຮັກສາປະເທດຊາດ ແລະ ປົກປັກຮັກສາສາສະໜາພຸດ.

ໃນຊຸມປີ 1948-1949 ກຳລັງທະຫານຂອງສັດຕູຢູ່ເຂດໃຕ້ ມີປະມານ 2.000 ຄົນ, ສັງກັດຢູ່ໃນກົງຈັກການຈັດຕັ້ງເຂດຍ່ອຍທີ່ ຂຶ້ນກັບກອງບັນຊາການເຂດພາກກາງ ແລະ ພາກໃຕ້ລາວ, ເຊິ່ງມີ ກອງບັນຊາການລວມຂອງຝຣັ່ງຕັ້ງຢູ່ເຊໂນ ( ບົນເສັ້ນທາງເລກທີ 9 ຫ່າງຈາກຕົວເມືອງສະຫວັນນະເຂດ ປະມານ 30 ຫລັກກິໂລແມັດ ໄປທາງທິດຕາເວັນອອກ), ກຳລັງທະຫານເຫລົ່ານີ້ ເຮັດໜ້າທີ່ປົກ ປ້ອງການຄວບຄຸມກວດກາຂອງຝຣັ່ງໃນອານາບໍລິເວນເຄິ່ງໜຶ່ງຂອງ ດິນແດນລາວທາງໃຕ້, ພ້ອມກັນນັ້ນກໍ່ເຮັດໜ້າທີ່ປ້ອງກັນສາຍທາງ

ລຳລຽງຂົນສົ່ງ 2 ເສັ້ນ ທີ່ເປັນສາຍເລືອດສຳຄັນຂອງພວກເຂົາ ຄື: ເສັ້ນທາງເລກ 9 ແລະ ເສັ້ນທາງເລກທີ່ 13.

ສຳນັກກອງບັນຊາການເຂດຍ່ອຍພາກໃຕ້ ຕັ້ງຢູ່ຕົວເມືອງປາກເຊ, ມີໜ້າທີ່ປົກປັກຮັກສາ 3 ແຂວງຢູ່ເຂດໃຕ້ ແລະ ໄດ້ແບ່ງອອກເປັນ 4 ເຂດນ້ອຍຄື: ເຂດປາກຊ່ອງ, ຄວບຄຸມກວດກາພູພຽງໂບລະເວນ, ເຊິ່ງກຳລັງຕົ້ນຕໍຕັ້ງຢູ່ເມືອງປາກຊ່ອງ ແລະ ມີສອງຄ້າຍເປັນປ້ອມດ້ານໜ້າຕັ້ງຢູ່ຫ້ວຍກອງ ແລະ ທ່າແຕງ; ເຂດສາລະວັນ, ຄວບຄຸມກວດກາທົ່ວແຂວງສາລະວັນ, ກຳລັງຕົ້ນຕໍຕັ້ງຢູ່ຕົວເມືອງສາລະວັນ ແລະ ມີສອງຄ້າຍຕັ້ງຢູ່ເມືອງເລົ່າງາມ ແລະ ເມືອງຄົງເຊໂດນ, ພ້ອມກັນນັ້ນ ກໍມີອີກຄ້າຍໜຶ່ງເປັນປ້ອມດ້ານໜ້າ ຕັ້ງຢູ່ຈ່າວານ ຫ່າງຈາກຕົວເມືອງສາລະວັນ ໄປທາງທິດຕາເວັນອອກ ປະມານ 2 ຄືນທາງ ( ໂດຍທາງຍ່າງ ); ເຂດອັດຕະປື, ຄວບຄຸມກວດກາທົ່ວແຂວງອັດຕະປື, ແຕ່ວ່າ ມີກຳລັງຕັ້ງຢູ່ເມືອງໃໝ່ ພຽງບ່ອນດຽວເທົ່ານັ້ນ.

ເຂດຍ່ອຍປາກເຊ ຍັງມີໜ້າທີ່ບັນຊາບັນດາປົດຄ້າຍທີ່ຕັ້ງຢູ່ຕາມເມືອງຕ່າງໆເຊັ່ນ: ເມືອງເພຍໄພ, ຈຳປາສັກ, ໂພນທອງ, ສຸຂຸມາ, ເມືອງມູນ ແລະ ຄ້າຍບ້ານຫາດຊາຍຄູນ.

ກຳລັງສັດຕູສ່ວນຫລວງຫລາຍແມ່ນທະຫານທຸ່ມທີ່ເກັບເກນຢູ່ກັບທີ່, ການເຝິກແອບ ແລະ ການປະກອບອາວຸດຜົວເຜີນ, ເບົາ

ບາງ, ມີແຕ່ຢູ່ສຳນັກບັນຊາການເຂດຍ່ອຍ ແລະ ເຂດນ້ອຍເທົ່ານັ້ນຈຶ່ງມີນາຍທະຫານຝຣັ່ງ.

ເຖິງວ່າພວກເຂົາໄດ້ພະຍາຍາມໂຄສະນາຊວນເຊື່ອຫລອກລວງດ້ວຍຫລາຍຮູບຫລາຍສີ, ອີກບໍ່ພໍຍັງໄດ້ຮັບການຮັບໃຊ້ ແລະ ຮ່ວມມືຈາກພວກບຸນອູ້ມ, ແຕ່ການເກັບເກນທະຫານກໍ່ພົບກັບອຸປະສັກຫລາຍປະການ, ກຳລັງຂອງແຕ່ລະກົມກອງ ລ້ວນແຕ່ຂາດດ້ານກຳລັງພົນ, ລະບຽບວິໄນຫລວມເຫລວ, ນ້ຳໃຈສູ້ຮົບກໍ່ບໍ່ສູງ.

## 2)- ການສ້າງເຂດທີ່ໝັ້ນຕໍ່ຕ້ານຢູ່ເຂດໃຕ້.

ເຖິງວ່າບໍ່ສາມາດລຸກຮືຂຶ້ນຍຶດອຳນາດ ໃຫ້ທັນກັບຄວາມຮຽກຮ້ອງຕ້ອງການຂອງລັດຖະບານລາວອິດສະລະກໍ່ຕາມ, ທັງນີ້ກໍ່ຍ້ອນວ່າທະຫານຝຣັ່ງໄດ້ກັບຄືນມາຍຶດເອົາບັນດາແຂວງ ຢູ່ເຂດໃຕ້ກ່ອນແລ້ວ ໃນເດືອນກັນຍາ - ຕຸລາ ປີ 1945; ແຕ່ດ້ວຍນ້ຳໃຈຄຽດແຄ້ນຕໍ່ພວກຈັກກະພັດຝຣັ່ງ ແລະ ພວກເຈົ້າສັກດີນາບຸນອູ້ມ, ປະຊາຊົນເຂດໃຕ້ທີ່ຢູ່ແຖບຊາຍແດນລາວ-ໄທ ກໍ່ໄດ້ພາກັນລຸກຂຶ້ນຕໍ່ສູ້ ເຊິ່ງໃນຂະນະນັ້ນດິນແດນຝັ່ງຂວາຂອງແຂວງຈຳປາສັກ ຍັງຢູ່ພາຍໃຕ້ການກວດກາຂອງໄທ ແລະ ຄະນະບັນຊາການພາກໃຕ້ຂອງລາວ ໂດຍແມ່ນລັດຖະບານລາວອິດສະລະເປັນຜູ້ຈັດຕັ້ງຂຶ້ນຢູ່

ນະຫວັນນະເຂດນັ້ນຍັງບໍ່ທັນສາມາດຍື້ນມືລົງຮອດເຂດໃຕ້ເທື່ອ.[1]

ກຳລັງປະກອບອາວຸດຂອງປະຊາຊົນຢູ່ຈຳປາສັກ ໃນເວລານັ້ນ ປະກອບດ້ວຍອ້າຍນ້ອງຊາວໜຸ່ມຈາກເມືອງຕ່າງໆ ແລະ ອ້າຍນ້ອງຊາວຫວຽດນາມຕ່າງດ້າວຢູ່ປາກເຊ ແລະ ປາກຊ່ອງ, ເຊິ່ງລວມມີສອງກອງດ້ວຍກັນ. ກອງໜຶ່ງໂດຍແມ່ນສະຫາຍ ເສີມ ມະໂນວຽງ ເປັນຜູ້ບັນຊາ ແລະ ອີກກອງໜຶ່ງແມ່ນ ບຸນກອງ ເປັນຜູ້ບັນຊາ.

ກອງຂອງສະຫາຍ ເສີມ ມະໂນວຽງ[2] ມີຈຳນວນພົນປະມານ 50 ຄົນ ເຄື່ອນໄຫວຢູ່ແຖບຕາເວັນຕົກຂອງເມືອງໂພນທອງ,

---

[1] ພາຍຫລັງທີ່ໄດ້ຮັບການສ້າງຕັ້ງຂຶ້ນ ( ວັນທີ 12/10/1945) ຄະນະລັດຖະບານລາວອິດສະລະ ໄດ້ຕົກລົງຈັດຕັ້ງຄະນະບັນຊາການພາກໃຕ້ຂອງລາວຂຶ້ນ ໂດຍມີບັນດາສະຫາຍ ທ້າວ ກົງ, ພູມ ສີປະເສີດ, ໄສ ແລະ ຕໍ່ມາມີສະຫາຍ ຄຳໄຕ ສີພັນດອນ ເປັນເລຂາທິການ. ປີ 1947 ກອງບັນຊາການພາກໃຕ້ໄດ້ແຕ່ງສະຫາຍ ຄຳໄຕ ສີພັນດອນ ລົງມາພົວພັນກັບທ່ານ ສີທົນ ກົມມະດຳ ແລະ ນຳເອົາອາວຸດຈຳນວນໜຶ່ງມາໃຫ້ກອງທະຫານຂອງສະຫາຍ ສຸກ ວົງສັກ ຢູ່ທາງເຂດປາກຊັນ ແລະ ປະກອບໃຫ້ກອງໄຊຈັກກະພັດທີ່ເຕົ້າໂຮມກັນຄືນໃໝ່.

[2] ທ້າຍເດືອນສິງຫາ ປີ 1945 ເມື່ອໄດ້ຮັບຂ່າວວ່າປະຊາຊົນຢູ່ວຽງຈັນ, ທ່າແຂກ, ສະຫວັນນະເຂດ ໄດ້ລຸກຮື້ຂຶ້ນຍຶດອຳນາດການປົກຄອງຈາກມືຍີ່ປຸ່ນ. ດ້ວຍການປຸກລະດົມຂອງພັກກອມມູນິດອິນດູຈີນ, ຊາວລາວ ແລະ ຫວຽດນາມຕ່າງດ້າວ ຜູ້ມີນ້ຳໃຈຮັກຊາດຈຳນວນໜຶ່ງຢູ່ປາກເຊ, ໃນນັ້ນມີສະຫາຍ ເສີມ ມະໂນວຽງ ກໍ່ໄດ້ກຽມການລຸກຂຶ້ນຍຶດອຳນາດ ແຕ່ສະພາບການບໍ່ເອື້ອອຳນວຍໃຫ້ ເພາະທະຫານຝຣັ່ງໄດ້ມາຍຶດເອົາເມືອງປາກເຊແລ້ວ. ສະຫາຍ ເສີມ ມະໂນວຽງ ພ້ອມດ້ວຍຄະນະຕ້ອງໜີອອກຈາກປາກເຊ ແລະ ໄດ້ຂົນຂວາຍອ້າຍນ້ອງຊາວໜຸ່ມລາວ ແລະ ຫວຽດນາມຕ່າງດ້າວຈຳນວນໜຶ່ງໄປນຳແລ້ວ ຈັດຕັ້ງເປັນກອງທະຫານລາວອິດສະລະຂຶ້ນຢູ່ແຖບຊາຍແດນລາວ-ໄທ ເພື່ອດຳເນີນການຕໍ່ຕ້ານຝຣັ່ງ.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ